ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງ ເຕັກໂນໂລຊີ ແລະ ສານສື່ສານ

ຫ້ອງການ

ເລກທີ: 2090 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 29 ຕຸລາ 2025.

## ໜັງສືແຈ້ງເຊີນປະມູນ

1. ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ຕາງໜ້າໂດຍຫ້ອງການ ຊຶ່ງໄດ້ຮັບອະນຸມັດງົບປະມານ ການຈັດຊື້ ເຄື່ອງຄອມພິວເຕີຕັ້ງໂຕະ, ຄອມພິວເຕີໂນດບຸກ ແລະ ເຄື່ອງພິມເອກະສານ; ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸດທິເໝາະສົມທີ່ດຳເນີນກິດຈະດ້ານອຸປະກອນໄອທີ ເຂົ້າຮ່ວມຍື່ນຊອງປະມູນ.
2. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນເປີດກ້ວາງ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
3. ການປະມູນນີ້ ອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄຸນນະວຸດທິເໝາະສົມ ແລະ ມີໃບອະນຸຍາດດຳເນີນທຸລະກິດຖືກຕ້ອງຕາມກົດໝາຍທີ່ກ່ຽວພັນກັບການສະໜອງອຸປະກອນດ້ານໄອທີ.
4. ບໍລິສັດທີ່ມີຄວາມສົນໃຈຊື້ເອກະສານປະມູນຄົບຊຸດທີ່ເປັນພາສາລາວ ສາມາດຕິດຕໍ່ພົວພັນໄດ້ທີ່ ຫ້ອງການ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ( ຕຶກກະຊວງ ຊັ້ນ 01 ຫ້ອງເບີ 100 ເບີໂທ: 021 219858 ) ຕັ້ງຢູ່: ບ້ານ ຊຽງຍືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ ແລະ ກວດກາເບິ່ງເອກະສານປະມູນໄດ້ທີ່ ຫ້ອງການ ກະຊວງ ໃນໂມງລັດຖະການ, ໃນລາຄາ 2.000.000 ກີບ/ຊອງ ( ສອງລ້ານ ກີບ ) ຈຳນວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ. ວິທີການຊໍາລະຕ້ອງຈ່າຍເປັນເງິນສົດ, ເລີ່ມຂາຍຊອງປະມູນ ຕັ້ງແຕ່ວັນທີ 03 ພະຈິກ 2025.
5. ຊອງປະມູນຕ້ອງສົ່ງກ່ອນເວລາ 09:00 ໂມງ ຂອງວັນທີ 28 ພະຈິກ 2025 ທີ່ຫ້ອງປະຊຸມຊັ້ນ 02 ຂອງຕຶກກະຊວງເຕັກໂນໂລຊີ ແລະ ການສື່ສານ. ບ້ານ ຊຽງຍືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ ຊອງປະມູນໃດສົ່ງຊ້າໃນເວລາທີ່ ກຳນົດໄວ້ ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ, ຊອງປະມູນທຸກໆຊອງຈະໄດ້ເປີດໃນວັນທີ 28 ພະຈິກ 2025 ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນຳ.
6. ທຸກຊອງປະມູນຕ້ອງໄດ້ປະກອບການຄ້ຳປະກັນການປະມູນດ້ວຍແຊັກເງິນສົດ ຫລື ໜັງສືຄ້ຳປະກັນອອກໂດຍທະນາຄານ ຊຶ່ງມູນຄ່າຂອງການຄ້ຳປະກັນບໍ່ໃຫ້ຫລຸດ 2% (ສ່ວນຮ້ອຍ) ຂອງມູນຄ່າທີ່ເໝາະສົມ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບໍລິສັດ/ຫ້າງຮ້ານທີ່ມີຄວາມສົນໃຈເຂົ້າຮ່ວມການປະມູນໃນຄັ້ງນີ້ດ້ວຍ.

ຫົວໜ້າຫ້ອງການ

ກະຊວງເຕັກໂນໂລຊີ ແລະ ການສື່ສານ

ຫ້ອງການ

ທັດສະດີ ພະລິຂັນ